Washington State
Department of Social
& Health Services
Transforming lives

# ອາຫານເສີມເພື່ອໃຫ້ໄດ້ອາຫານຄົບໝວດໝູ່ໃນກໍລະນີສຸກເສີນ
# ຄໍາຖາມທີ່ຖືກຖາມເລື້ອຍໆ

DSHS ແມ່ນກໍາລັງສົ່ງອາຫານເສີມໃນກໍລະນີສຸກເສີນໃຫ້ແກ່ຄົນທີ່ໄດ້ຮັບການຊ່ວຍເຫຼືອດ້ານອາຫານ (EBT). ຖ້າທ່ານໄດ້ຮັບຜົນປະໂຫຍດໃນເດືອນມີນາ, ທ່ານຈະໄດ້ຮັບຜົນປະໂຫຍດເພີ່ມເຕີມຫຼາຍຂຶ້ນເພື່ອນໍາຈໍານວນເງິນໃນເດືອນມີນາມາໃຊ້ໃຫ້ໄດ້ຫຼາຍທີ່ສຸດສໍາລັບຂະໜາດຄົວເຮືອ ຂອງທ່ານ.

## ເປັນຫຍັງຈຶ່ງເກີດແບບນີ້ຂຶ້ນ?

ສະພາຄອນເກສໄດ້ອະນຸມັດຜົນປະໂຫຍດພິເສດເພື່ອໃຫ້ປະຊາຊົນມີຄວາມສາມາດໃນການຊື້ອາຫານຫຼາຍຂຶ້ນ. ນີ້ຈະຊ່ວຍຫຼຸດຜ່ອນຈໍານວນຄົນທີ່ຕ້ອງການໄປຊື້ເຄື່ອງແຫ້ງ. ນອກນີ້ ມັນຍັງຈະຈໍາກັດຈໍານວນຄົນທີ່ຢູ່ຮ້ານ ແລະ ຫຼຸດໂອກາດສໍາລັບການຕິດຕໍ່ COVID-19.

## ຂ້ອຍຈະໄດ້ຮັບຜົນປະໂຫຍດພິເສດເມື່ອໃດ?

ຜົນປະໂຫຍດເດືອນມີນາແມ່ນມີໃນ ວັນທີ 4 ເດືອນ ເມສາ.

## ຈະເປັນແນວໃດກ່ຽວກັບຜົນປະໂຫຍດເດືອນເມສາ? ມີການປ່ຽນແປງຕໍ່ຈໍານວນເຫລົ່ານັ້ນບໍ່?

ຖ້າທ່ານກໍາລັງໄດ້ຮັບຜົນປະໂຫຍດໃນເດືອນເມສາແລ້ວ, ທ່ານຈະໄດ້ຮັບຈໍານວນເງິນສູງສຸດສໍາລັບຂະໜາດຂອງຄົວເຮືອນຂອງທ່ານໃນວັນທີຮັບຜົນປະໂຫຍດປົກກະຕິຂອງທ່ານ, ເວັ້ນເສຍແຕ່ວ່າທ່ານຈະໄດ້ຮັບຜົນປະໂຫຍດໃນວັນທີ 1–3 ເດືອນ ເມສາ. ຖ້າທ່ານໄດ້ຮັບຜົນປະໂຫຍດໃນວັນທີ 1–3 ເດືອນ ເມສາ, ທ່ານຈະໄດ້ຮັບຜົນປະໂຫຍດພິເສດຂອງເດືອນເມສາ ໃນວັນທີ 4 ເດືອນ ເມສາ.

## ຂ້ອຍຍັງບໍ່ໄດ້ສະໝັກຈົນເຖິງເດືອນເມສາ. ຂ້ອຍຈະໄດ້ຮັບຜົນປະໂຫຍດພິເສດບໍ່?

ທ່ານຈະບໍ່ໄດ້ຮັບຜົນປະໂຫຍດພິເສດສໍາລັບເດືອນມີນາຖ້າທ່ານບໍ່ສະໝັກຈົນຮອດເດືອນເມສາ. ແຕ່ວ່າ ທ່ານຈະໄດ້ຮັບຈໍານວນເງິນສູງສຸດສໍາລັບຂະໜາດຂອງຄົວເຮືອນຂອງທ່ານຖ້າໄດ້ຮັບອະນຸມັດໃນເດືອນເມສາ.

## ຂ້ອຍໄດ້ຮັບຈໍານວນເງິນສູງສຸດຂອງເດືອນ ມີນາ ແລະ ເມສາ ແລ້ວ. ຂ້ອຍຈະໄດ້ຮັບຜົນປະໂຫຍດພິເສດບໍ່?

ຖ້າທ່ານໄດ້ຮັບຈໍານວນເງິນສູງສຸດແລ້ວ, ທ່ານຈະບໍ່ໄດ້ຮັບຜົນປະໂຫຍດອື່ນໃນເດືອນມີນາ ຫຼື ເມສາ.

## ຈຳນວນເງິນຊ່ວຍເຫຼືອສູງສຸດແມ່ນເທົ່າໃດ?

| ສະມາຊິກຄົວເຮືອນທີ່ມີສິດໄດ້ຮັບ | ຜົນປະໂຫຍດສູງສຸດ |
|---|---|
| 1 | $194 |
| 2 | 355 |
| 3 | 509 |
| 4 | 646 |
| 5 | 768 |
| 6 | 921 |
| 7 | 1,018 |
| 8 | 1,164 |
| 9 | 1,310 |
| 10 | 1,456 |
| ແຕ່ລະຄົນໄດ້ເພີ່ມເຕີມ | + 146 |

## ຂ້ອຍມີສິດໄດ້ຮັບອາຫານພື້ນຖານແຕ່ຂ້ອຍບໍ່ໄດ້ຮັບຜົນປະໂຫຍດຫຍັງເລີຍ. ຂ້ອຍຈະໄດ້ຮັບຜົນປະໂຫຍດພິເສດບໍ່?

ໄດ້. ທ່ານຈະໄດ້ຮັບຜົນປະໂຫຍດພິເສດຂອງຈຳນວນເງິນສູງສຸດສຳລັບຂະໜາດຄອບຄົວຂອງທ່ານຖ້າປົກະຕິດທ່ານໄດ້ຮັບ $0.

## ຂ້ອຍໄດ້ຮັບ WASHCAP / ການຊ່ວຍເຫຼືອດ້ານອາຫານສະເພາະການ / ການຊ່ວຍເຫຼືອດ້ານອາຫານສຳລັບຜົນປະໂຫຍດຂອງຄົນອົບພະຍົບທີ່ຖືກກົດໝາຍ. ຂ້ອຍຈະໄດ້ຮັບຜົນປະໂຫຍດພິເສດບໍ່?

ໄດ້. ຜົນປະໂຫຍດພິເສດແມ່ນໃຊ້ໄດ້ກັບທຸກໆໂຄງການຊ່ວຍເຫຼືອດ້ານອາຫານ.

## ຂ້ອຍຈະໄດ້ຮັບຜົນປະໂຫຍດພິເສດເທົ່າໃດ?

ທ່ານຈະໄດ້ຮັບແຕກຕ່າງກັນລະຫວ່າງຜົນປະໂຫຍດປົກກະຕິຂອງທ່ານ ແລະ ຈຳນວນເງິນສູງສຸດສຳລັບຂະໜາດຄົວເຮືອນຂອງທ່ານ. ຍົກຕົວຢ່າງ:

*ທ່ານ ແລະ ຄູ່ຮັກຂອງທ່ານທັງສອງເຮັດວຽກ ແລະ ໄດ້ຮັບເງິນຊ່ວຍເຫຼືອອາຫານທັງໝົດ$200 ໃນວັນທີ10 ເດືອນມີນາ. ການແບ່ງສ່ວນສູງສຸດສໍາລັບຄົວເຮືອນສອງຄົນແມ່ນ$355. $355 - $200 ແມ່ນ$155. ທ່ານຈະໄດ້ຮັບເງິນຊ່ວຍເຫຼືອເພີ່ມເຕີມ $155 ໃນຜົນປະໂຫຍດກໍລະນີສຸກເສີນ. ທ່ານຈະໄດ້ຮັບເງິນຊ່ວຍເຫຼືອພື້ນຖານ$200 ຂອງທ່ານພ້ອມດ້ວຍ$155 ເພີ່ມເຕີມ ສໍາລັບຈໍານວນທັງໝົດ $355 ໃນວັນທີປົກກະຕິຂອງທ່ານໃນວັນທີ 10 ເດືອນ ເມສາ*

**ຂ້ອຍຈະຕ້ອງຈ່າຍຜົນປະໂຫຍດເຫຼົ່ານີ້ຄືນບໍ?**

ນີ້ແມ່ນຜົນປະໂຫຍດພິເສດສໍາລັບການນໍາໃຊ້ຂອງທ່ານ. ບໍ່ມີເຫດຜົນຫຍັງທີ່ທ່ານຕ້ອງຈ່າຍຄືນ.

**ຜົນປະໂຫຍດພິເສດເຫຼົ່ານີ້ຈະສົ່ງຜົນກະທົບຕໍ່ສະຖານະພາບການເຂົ້າເມືອງຂອງຂ້ອຍບໍ?**

ບໍ່.

**DSHS ຈະອອກຈໍານວນເງິນສູງສຸດສໍາລັບເດືອນພຶດສະພາ ຫຼື ມິຖຸນາບໍ?**

ສະພາຄອງເກສອະນຸມັດຜົນປະໂຫຍດພິເສດສໍາລັບເດືອນມີນ າແລະ ເມສາ 2020 ເທົ່ານັ້ນ.
ຖ້າສະພາຄອງເກສອະນຸມັດໃຫ້ມີອີກຫຼາຍເດືອນເພີ່ມ, DSHS ຈະອອກເງິນຊ່ວຍເຫຼືອພິເສດສໍາລັບເດືອນເຫຼົ່ານັ້ນ.

**ມີຈັກຄົນທີ່ຈະໄດ້ຮັບຜົນປະໂຫຍດພິເສດ?**

DSHS ກໍາລັງໃຫ້ຜົນປະໂຫຍດພິເສດປະມານ 277,000 ຄົວເຮືອນໃນເດືອນມີນາ ແລະ ເມສາ.

**ຈໍານວນສະເລ່ຍຂອງຜົນປະໂຫຍດພິເສດແມ່ນຫຍັງ?**

ໃນທົ່ວລັດ ຈໍານວນເງິນພິເສດສະເລ່ຍຕໍ່ຄົວເຮືອນແມ່ນ $155. ບາງຄົວເຮືອນຈະໄດ້ຮັບຫຼາຍ, ບາງຄົວເຮືອນກໍ່ໜ້ອຍກວ່າ.

**DSHS ຈະສົ່ງຈົດໝາຍໃຫ້ຂ້ອຍເມື່ອຂ້ອຍໄດ້ຮັບຜົນປະໂຫຍດພິເສດບໍ?**

ບໍ່. ພວກເຮົາຈະບໍ່ໄດ້ສົ່ງຈົດໝາຍເມື່ອພວກເຮົາອອກຜົນປະໂຫຍດພິເສດ.
ຖ້າທ່ານຕ້ອງການຮູ້ວ່າຜົນປະໂຫຍດຂອງທ່ານຢູ່ໃນບັນຊີຂອງທ່ານ, ທ່ານສາມາດໂທຫາເບີທີ່ຢູ່ໃນບັດ EBT ຂອງທ່ານເພື່ອກວດເບິ່ງຍອດເງິນຂອງທ່ານ ຫຼື ໃຊ້ບັນຊີຜົນປະໂຫຍດລູກຄ້າຂອງທ່ານ www.washingtonconnection.org.

**ຂ້ອຍຄວນໂທຫາສູນຕິດຕໍ່ບໍລິການລູກຄ້າບໍ?**

ເນື່ອງຈາກປະລິມານການໂທຫາສູນຂອງພວກເຮົາຫຼາຍກວ່າປົກກະຕິ,
ພວກເຮົາກໍາລັງຮ້ອງຂໍໃຫ້ທ່ານຢ່າໂທຫາສູນບໍລິການກ່ຽວກັບຜົນປະໂຫຍດພິເສດ.
ກວດເບິ່ງຂໍ້ມູນຫຼ້າສຸດຢູ່ບັນຊີສື່ສັງຄົມຂອງພວກເຮົາທີ່ Facebook ແລະ Twitter ຫຼື ທີ່ www.dshs.wa.gov.